**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສຳນັກງານນາຍົກລັດຖະມົນຕີ

ອົງການວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ເລກທີ: 1037/ອວຕສ-ສນຍ

ນະຄອນຫລວງວຽງຈັນ, ວັນທີ: 11/06/2002

## ຂໍ້ກຳນົດ
## ວ່າດ້ວຍການຂຶ້ນທະບຽນຜະລິດຕະພັນສິນຄ້າ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 85/ນຍ, ລົງວັນທີ 02 ພະຈິກ 1995 ວ່າດ້ວຍການຄຸ້ມຄອງມາດຕະຖານ ແລະ ຄຸນນະພາບຜະລິດຕະພັນສິນຄ້າ.
- ອີງຕາມຄວາມຮຽກຮ້ອງຕ້ອງການ ໃນການສົ່ງເສີມ ແລະ ຊຸກຍູ້ການຜະລິດ ຢູ່ພາຍໃນປະເທດ ໃຫ້ມີການປັບປຸງຄຸນນະພາບ ແລະ ມາດຕະຖານຂອງຜະລິດຕະພັນ ເພື່ອໃຫ້ກາຍເປັນສິນຄ້າທີ່ສາມາດແຂ່ງຂັນ ໃນທ້ອງຕະຫລາດບໍ່ວ່າທັງພາຍໃນ ແລະ ຕ່າງປະເທດ.
- ອີງໃສ່ ຄວາມຮຽກຮ້ອງຕ້ອງການໃຫ້ດັດແກ້ບາງມາດຕາ ຂອງຂໍ້ກຳນົດວ່າດ້ວຍການຂຶ້ນທະບຽນຜະລິດຕະພັນສິນຄ້າ ສະບັບເລກທີ 228/ອວຕສ, ລົງວັນທີ 14/2/1996 ທີ່ເຫັນວ່າບໍ່ສອດຄ່ອງກັບສະພາບການຕົວຈິງໃນປັດຈຸບັນ.

ຫົວໜ້າອົງການວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ອອກຂໍ້ກຳນົດ:

## ໝວດທີ I
## ວ່າດ້ວຍຫລັກການທົ່ວໄປ

**ມາດຕາ 1.** ການຂຶ້ນທະບຽນຜະລິດຕະພັນສິນຄ້າ ແມ່ນແນໃສ່ຮັບຮອງຄຸນນະພາບຂອງສິນຄ້າຊົ່ວຄາວໃນຄະນະທີ່ຜະລິດຕະພັນສິນຄ້າດັ່ງກ່າວ ຍັງບໍ່ໄດ້ຮັບການກຳນົດມາດຕະຖານ ຂຶ້ນມາເທື່ອເພື່ອເຮັດໃຫ້ຜະລິດຕະພັນສິນຄ້ານັ້ນ ໄດ້ຮັບການປັບປຸງ ທາງດ້ານຄຸນນະພາບ ແລະ ກ້າວໄປເຖິງ ການກຳນົດມາດຕະຖານແຫ່ງຊາດຂຶ້ນ.

**ມາດຕາ 2.** ບັນດາການຈັດຕັ້ງລັດ, ລວມໝູ່, ເອກະຊົນ (ຕໍ່ໄປນີ້ເອີ້ນວ່າ ການຈັດຕັ້ງ) ແລະ ບຸກຄົນທີ່ທຳການຜະລິດສິນຄ້າ, ເຊິ່ງຜະລິດຕະພັນດັ່ງກ່າວ ຍັງບໍ່ໄດ້ຮັບການກຳນົດມາດຕະຖານ ໂດຍມີຈຸດປະສົງຢາກປັບປຸງຄຸນນະພາບສິນຄ້າຂອງຕົນ ກ້າວໄປເຖິງການກຳນົດມາດຕະຖານ ແລະ ນຳໃຊ້ກາໝາຍມາດຕະຖານແຫ່ງຊາດ ກັບຜະລິດຕະພັນດັ່ງກ່າວນັ້ນ ໃຫ້ຍື່ນຄຳຮ້ອງຂໍຂຶ້ນທະບຽນ ຜະລິດຕະພັນສິນຄ້າ ນຳອົງການວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ(ຕໍ່ໄປນີ້ເອີ້ນຫຍໍ້ວ່າ ອົງການຄຸ້ມຄອງມາດຕະຖານ).

**ມາດຕາ 3.** ການຈັດຕັ້ງ ແລະ ບຸກຄົນ ທີ່ໄດ້ຍື່ນຄຳຮ້ອງ ຂຶ້ນທະບຽນຜະລິດຕະພັນສິນຄ້າຈະໄດ້ຮັບໃບຢັ້ງຢືນຄຸນນະພາບຊົ່ວຄາວ, ຮັບການປຶກສາ ແລະ ຕິດຕາມຊ່ວຍເຫລືອຈາກອົງການຄຸ້ມຄອງມາດຕະຖານ ໃນການປັບປຸງຄຸນນະພາບ ແລະ ການກຳນົດມາດຕະຖານຂອງຜະລິດຕະພັນສິນຄ້າດັ່ງກ່າວ.

**ມາດຕາ 4.** ອົງການຄຸ້ມຄອງມາດຕະຖານ ຈະຮັບການພິຈາລະນາ ຂຶ້ນທະບຽນຜະລິດຕະພັນສິນຄ້າກໍ່ຕໍ່ເມື່ອຜະລິດຕະພັນສິນຄ້າດັ່ງກ່າວ ໄດ້ຜະລິດຈາກໂຮງງານຢູ່ ສປປ ລາວ.

## ໝວດທີ II
## ວ່າດ້ວຍລະບຽບການຂຶ້ນທະບຽນ ຜະລິດຕະພັນສິນຄ້າ

**ມາດຕາ 5.** ການຈັດຕັ້ງ ຫລື ບຸກຄົນທີ່ທຳການຜະລິດ ມີຄວາມຕ້ອງການ ຂໍຂຶ້ນທະບຽນຜະລິດຕະພັນສິນຄ້າ ຈະຕ້ອງໄດ້ຍື່ນຄຳຮ້ອງ ຕໍ່ອົງການຄຸ້ມຄອງມາດຕະຖານເຊິ່ງປະກອບດ້ວຍຂໍ້ມູນແລະເອກະສານຕ່າງໆ (ຕາມແບບຟອມຂອງອົງການ ຄຸ້ມຄອງມາດຕະຖານ) ຄື:

1. ລາຍການລະອຽດ ກ່ຽວກັບຜະລິດຕະພັນສິນຄ້າ ທີ່ຂໍຂຶ້ນທະບຽນ (ຊື່ການຄ້າ, ປະເພດ..)
2. ລາຍລະອຽດກ່ຽວກັບ ກຳມະວິທີການຜະລິດ,
3. ແຫລ່ງວັດຖຸດິບທີ່ຈະນຳໃຊ້,
4. ລາຍລະອຽດກ່ຽວກັບ ຕົ້ນທືນຂອງການຜະລິດ,
5. ລາຄາຂາຍ
6. ເອກະສານອ້າງອີງ ຫລື ມາດຕະຖານທີ່ໄດ້ນຳໃຊ້
7. ຫລັກຖານການຮັບຮອງຄຸນນະພາບ ຫລື ຜົນຂອງການກວດສອບ

8. ສາຂາຜະລິດຢູ່ພາຍໃນປະເທດ
9. ເປົ້າໝາຍຜູ້ຊົມໃຊ້ ແລະ ແຜນການຈຳໜ່າຍ
10. ສຳເນົາເອກະສານ ປະກອບກິດຈະການຂອງໂຮງງານ

**ມາດຕາ 6.** ການຂຶ້ນທະບຽນຜະລິດຕະພັນສິນຄ້າ ປະກອບດ້ວຍຂັ້ນຕອນດັ່ງນີ້:

1. ການກວດກາ ແລະ ເອກະສານຕ່າງໆ ເມື່ອເຫັນວ່າຄົບຖ້ວນແລ້ວ ອົງການຄຸ້ມຄອງມາດຕະຖານ ຈະໄດ້ສົ່ງຄະນະວິຊາການ ລົງກວດກາຕົວຈິງຢູ່ໂຮງງານ.
2. ອົງການຄຸ້ມຄອງມາດຕະຖານ ຈະຕີລາຄາ, ທຳການຂຶ້ນທະບຽນ ຜະລິດຕະພັນສິນ ຄ້າ ແລະ ສົ່ງຄະນະວິຊາການ ລົງສົມທົບກັບໂຮງງານ ເພື່ອໃຫ້ຄຳແນະນຳໃນການປັບປຸງຂໍ້ບົກຜ່ອງຕ່າງໆ ແລະ ກ້າວໄປເຖິງການກຳນົດ ມາດຕະຖານຜະລິດຕະພັນສິນຄ້າຮ່ວມກັນຂຶ້ນ.

**ມາດຕາ 7.** ຜູ້ຂຶ້ນທະບຽນຜະລິດຕະພັນສິນຄ້າ ຕ້ອງໄດ້ເສຍຄ່າບໍລິການ ແລະ ຄ່າທຳນຽມດັ່ງນີ້:

1. ໃບຄຳຮ້ອງ 1 ຊຸດ 5,000 ກີບ.
2. ລົງເກັບກຳສະພາບ 15,000 ກີບ.
3. ໃບຢັ້ງຢືນຄຸນນະພາບຊົ່ວຄາວ 50.000 ກີບ.
4. ຄ່າກວດສອບຄຸນນະພາບແຕ່ລະຄັ້ງໃຫ້ອີງໃສ່ມູນຄ່າຂອງການກວດສອບຕົວຈິງຂອງຫ້ອງກວດສອບທີ່ກ່ຽວຂ້ອງ

## ໝວດທີ III
## ວ່າດ້ວຍຫລັກການ ພິຈາລະນາການຂຶ້ນທະບຽນ ຜະລິດຕະພັນສິນຄ້າ

**ມາດຕາ 8.** ຫລັກການພິຈາລະນາ ປະກອບມີເນື້ອໃນສຳຄັນຄື:

1. ການຮ້ອງຂໍ ຂຶ້ນທະບຽນຜະລິດຕະພັນ,
2. ເຊີນຜູ້ກ່ຽວຂ້ອງມາໃຫ້ຄຳອະທິບາຍ ແລະ ສອບຖາມຂໍ້ມູນຕ່າງໆ.

**ມາດຕາ 9.** ບັນດາບຸລິມະສິດ ກ່ຽວກັບເງື່ອນໄຂພິຈາລະນາ ຂໍຂຶ້ນທະບຽນຜະລິດຕະພັນສິນຄ້າ ມີດັ່ງນີ້:

1. ຜະລິດຕະພັນດັ່ງກ່າວມີການນຳໃຊ້ວັດຖຸດິບ ຢູ່ພາຍໃນປະເທດ, ມູນຄ່າ ແລະ ຕົ້ນທືນການຜະລິດ ສູງ ແລະ ອື່ນໆ,
2. ຜະລິດຕະພັນດັ່ງກ່າວໄດ້ນຳໃຊ້ກາຫມາຍມາດຕະຖານຈາກຕ່າງປະເທດຫລືລະຫວ່າງປະເທດ,
3. ຫລັກການອື່ນໆຄື:

- ເປັນຜະລິດຕະພັນ ທີ່ໄດ້ທຳການຜະລິດມາແລ້ວ ແຕ່ຍັງບໍ່ທັນໄດ້ປະກາດໃຊ້ມາດຕະຖານ,
- ຜະລິດຕະພັນດັ່ງກ່າວ ບໍ່ຈັດຢູ່ໃນປະເພດຍານພາຫານະ ຫລື ກົນຈັກ,
- ເປັນຜະລິດຕະພັນທີ່ ຜະລິດເພື່ອແຂ່ງຂັນກັບ ຜະລິດຕະພັນຈາກຕ່າງປະເທດ,
- ກຳມະວິທີການຜະລິດ ທີ່ໄດ້ເກີດມີການພັດທະນາ ດ້ານອຸດສາຫະກຳ,
- ກຳມະວິທີການຜະລິດເຫມາະສົມແລະສາມາດຄວບຄຸມຄຸນນະພາບໄດ້ງ່າຍສະຫມ່ຳສະເໝີ,
- ເປັນຜະລິດຕະພັນ ທີ່ສາມາດກຳນົດມາດຕະຖານໄດ້,
- ມີໃບອະນຸຍາດຕ່າງໆ ທີ່ປະກອບໃນກິດຈະການຂອງໂຮງງານ.

**ມາດຕາ 10.** ໃນກໍລະນີທີ່ຜະລິດຕະພັນ ໄດ້ຜະລິດຈາກໂຮງງານສອງແຫ່ງຂຶ້ນໄປ ເຊິ່ງໄດ້ນຳໃຊ້ເຄື່ອງຫມາຍການຄ້າອັນດຽວກັນ ຜູ້ຂໍຂຶ້ນທະບຽນຈະຕ້ອງໄດ້ ແຈ້ງລາຍຊື່ຂອງໂຮງງານ ທີ່ໄດ້ຜະລິດສິນຄ້າດັ່ງກ່າວ ໃຫ້ອົງການຄຸ້ມຄອງມາດຕະຖານຊາບ.

## ຫມວດທີ IV
## ວ່າດ້ວຍການຢັ້ງຢືນ ການຂຶ້ນທະບຽນ ຜະລິດຕະພັນສິນຄ້າ

**ມາດຕາ 11.** ອົງການຄຸ້ມຄອງມາດຕະຖານ ຈະອອກໃບຢັ້ງຢືນຄຸນນະພາບຊົ່ວຄາວ ໃຫ້ຜູ້ຮ້ອງຂໍຖ້າຕອບສະຫນອງ ຕາມເງື່ອນໄຂຕ່າງໆ ດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ.

**ມາດຕາ 12.** ໃນເມື່ອຜູ້ຂໍຮ້ອງຂຶ້ນທະບຽນ ຜະລິດຕະພັນສິນຄ້າ ເລີກປະກອບກິດຈະການ ຕ້ອງແຈ້ງໃຫ້ອົງການຄຸ້ມຄອງມາດຕະຖານຮັບຮູ້ ພາຍໃນສາມສິບ (30) ວັນກ່ອນ ຫລື ຫລັງວັນເລີກ ປະກອບກິດຈະການ.

**ມາດຕາ 13.** ໃນກໍລະນີທີ່ມີການຍົກຍ້າຍສະຖານທີ່ ຫລື ການໂອນໃບຢັ້ງຢືນ ຂຶ້ນທະບຽນຜະລິດຕະພັນສິນຄ້າໃຫ້ຜູ້ອື່ນ ຕ້ອງໄດ້ແຈ້ງໃຫ້ ອົງການຄຸ້ມຄອງມາດຕະຖານຊາບເສັຍກ່ອນ.

**ມາດຕາ 14.** ອາຍຸການຂອງໃບຢັ້ງຢືນ ຄຸນນະພາບຊົ່ວຄາວ ຈະຫມົດອາຍຸກໍ່ຕໍ່ເມື່ອ:

1. ໄດ້ມີການປະກາດນຳໃຊ້ ມາດຕະຖານຂອງຜະລິດຕະພັນດັ່ງກ່າວ,
2. ໄດ້ມີການຮ້ອງທຸກ ຫລື ຮ້ອງຟ້ອງຈາກມວນຊົນ ກ່ຽວກັບຄຸນນະພາບ ຂອງຜະລິດຕະພັນສິນຄ້າ,
3. ພາຍຫລັງການກວດສອບຕິດຕາມ ແລະ ເຫັນວ່າຄຸນນະພາບຂອງ ຜະລິດຕະພັນສິນຄ້າ ທີ່ໄດ້ຂຶ້ນທະບຽນໄປນັ້ນ ບໍ່ເປັນໄປຕາມກຳນົດໄວ້ ຫລື ຂັດຕໍ່ລະບຽບການຕ່າງໆ ກ່ຽວກັບການຂຶ້ນທະບຽນ,
4. ເຈົ້າຂອງທະບຽນບໍ່ໄດ້ທຳການຜະລິດ, ບໍລິມາດຜະລິດຕ່ຳ ແລະ ບໍ່ໄດ້ມີການປັບປຸງຄຸນນະພາບພາຍຫລັງຈາກການຂຶ້ນທະບຽນ ເປັນໄລຍະ 2 ປີ,
5. ເຈົ້າຂອງທະບຽນ ບໍ່ໄດ້ໃຫ້ຄວາມຮ່ວມມື ກ່ຽວກັບການຕິດຕາມກວດສອບ ຫລື ການຕອບສະຫນອງຂໍ້ມູນຕ່າງໆ,
6. ເມື່ອມີເວລາມີການຍ້າຍ ຫລື ໂອນໂຮງງານໃຫ້ຄົນອື່ນ ໂດຍທີ່ບໍ່ໄດ້ແຈ້ງໃຫ້ ອົງການຄຸ້ມຄອງມາດຕະຖານຊາບ.

## ຫມວດທີ V
## ວ່າດ້ວຍການຈັດຕັ້ງປະຕິບັດ

**ມາດຕາ 15.** ອົງການວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມອບໃຫ້ກົມ ຊັບສິນທາງປັນຍາ, ມາດຕະຖານ ແລະ ວັດແທກ ເປັນຜູ້ຈັດຕັ້ງປະຕິບັດ ຂໍ້ກຳນົດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 16.** ຂໍ້ກຳນົດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ທຸກຂໍ້ກຳນົດ ແລະ ລະບຽບການອື່ນໆ ທາກຂັດກັບຂໍ້ກຳນົດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ຫົວໜ້າອົງການວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ**